ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 135 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 11 AUG 2016

ພະນັກງານ ຄຄຊ
ເລກທີ 0791
ວັນທີ 12 AUG 2016
ສັບ 021 217770

# ແຈ້ງການ

**ເຖິງ**: ບັນດາທ່ານ ຫົວໜ້າກົມ, ທຽບເທົ່າ ແລະ ບັນດາສາຂາຂອງ ທຫລ ປະຈຳຢູ່ແຕ່ລະພາກ ທີ່ນັບຖື.

**ເລື່ອງ**: ການລາພັກຂອງພະນັກງານ-ລັດຖະກອນ ຢູ່ ທະນາຄານແຫ່ງ ສປປ ລາວ.

- ອີງຕາມກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນແຫ່ງ ສປປ ລາວ ເລກທີ 74/ສພຊ ລົງວັນທີ 18/12/2015, ແຈ້ງການຂອງກະຊວງພາຍໃນ ເລກທີ 82/ພນ ລົງວັນທີ 3/6/2016 ແລະ ຄຳແນະນຳການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ເລກທີ 08/ພນ ລົງວັນທີ 2/8/2016;
- ອີງຕາມທິດຊີ້ນຳຂອງຄະນະຜູ້ອຳນວຍການ ທຫລ ຄັ້ງວັນທີ 8/8/2016.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນໄລຍະຜ່ານມາ ທຫລ ໄດ້ອະນຸຍາດໃຫ້ພະນັກງານລາພັກໃນກໍລະນີຕ່າງໆ ໂດຍອີງຕາມລະບຽບການລາພັກຂອງ ທຫລ ສະບັບເລກທີ 477/ທຫລ ລົງວັນທີ 28/11/2006 ຊຶ່ງຜັນຂະຫຍາຍມາຈາກລະບຽບລັດຖະກອນແຫ່ງ ສປປ ລາວ. ປັດຈຸບັນຂັ້ນເທິງກ່ຽວຂ້ອງໄດ້ມີການປັບປຸງລະບຽບການດັ່ງກ່າວມາເປັນກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນແຫ່ງ ສປປ ລາວ ເລກທີ 74/ພນ ລົງວັນທີ 18/12/2015, ໃນນັ້ນ ມີບາງມາດຕາຕິດພັນກັບລະບຽບການລາພັກຂອງ ທຫລ ດັ່ງນີ້:

**1. ການລາພັກອອກລູກ:** ອະນຸຍາດໃຫ້ພັກເປັນເວລາ 5 ເດືອນ ຊຶ່ງສາມາດພັກກ່ອນ ຫຼື ຫຼັງອອກລູກກໍ່ໄດ້, ໃນກໍລະນີທີ່ອອກລູກແຝດ ໃຫ້ພັກຕື່ມອີກ 2 ເດືອນ, ຖ້າອອກລູກດ້ວຍການຜ່າຕັດ ໃຫ້ພັກ 6 ເດືອນ;

**2. ການລາພັກຫຼຸລູກ:** ກໍລະນີຫຼຸລູກ ຊຶ່ງຖືພາໄດ້ 2-6 ເດືອນ ໃຫ້ພັກ 3 ເດືອນ; ຖ້າຫຼຸລູກ ຊຶ່ງຖືພາເກີນ 6 ເດືອນຂຶ້ນໄປ ໃຫ້ພັກ 5 ເດືອນ ເທົ່າກັບເກີດລູກ;

**3. ການລາພັກເບິ່ງແຍງຄອບຄົວ:** ເບິ່ງແຍງເມຍອອກລູກ ຫຼື ຫຼຸລູກ ບໍ່ໃຫ້ເກີນ 15 ວັນ (ໃຫ້ລາພັກລວດດຽວ); ລາພັກເບິ່ງແຍງເວລາເຈັບເປັນ ຫຼື ເສຍຊີວິດຂອງເມຍ ຫຼື ຜົວ, ພໍ່, ແມ່ ແລະ ລູກຂອງພະນັກງານ-ລັດຖະກອນ ບໍ່ໃຫ້ເກີນ 10 ວັນ.

ໂດຍອີງຕາມແຈ້ງການຂອງກະຊວງພາຍໃນ ສະບັບເລກທີ 82/ພນ ລົງວັນທີ 3/6/2016 ແມ່ນອະນຸຍາດໃຫ້ນຳໃຊ້ກົດໝາຍດັ່ງກ່າວ ນັບແຕ່ວັນທີ **14/5/2016** ເປັນຕົ້ນໄປ. ສະນັ້ນ, ຈຶ່ງແຈ້ງມາຍັງບັນດາກົມກອງ ຊ່ວຍແຈ້ງໃຫ້ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຊາບຢ່າງທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ; ສຳລັບພະນັກງານອອກລູກ ແຕ່ວັນທີ **14/5/2016** ຜ່ານມາ, ກົມຈັດຕັ້ງແລະພະນັກງານຈະອອກໃບອະນຸຍາດໃຫ້ສືບຕໍ່ລາພັກຕາມການກຳນົດຂ້າງເທິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ. ປ. ປ. ລາວ — ກົມຈັດຕັ້ງແລະພະນັກງານ

ພານຸສັກ **ແກ່ນວົງພະຈັນ**